| ຂໍ້ມູນທີ່ໄດ້ຮັບຈາກຂະແໜງການທີ່ກ່ຽວຂ້ອງ | |
|---|---|
| ຊື່ໃບອະນຸຍາດ | ໃບຢັ້ງຢືນການອະນຸມັດສິດທິບັດ |
| **ປະເພດເອກະສານ** | ໃບຢັ້ງຢືນ |
| **ວັນທີແກ້ໄຂຂໍ້ມູນລ່າສຸດ** | 22.12.2017 |
| **ພາກສ່ວນຮັບຜິດຊອບ** | ກົມຊັບສິນທາງປັນຍາ |
| **ຜູ້ທີ່ສາມາດຍື່ນຂໍເອກະສານ** | ຜູ້ເປັນເຈົ້າຂອງ ການປະດິດສ້າງ ຊຶ່ງໝາຍເຖິງການນໍາໃຊ້ວິທີການທາງດ້ານເຕັກນິກເພື່ອສ້າງຜະລິດຕະພັນ ຫລື ກໍາມະວິທີການຜະລິດໃໝ່ ໃນການແກ້ໄຂບັນຫາສະເພາະໃດໜຶ່ງ ແລະ ເປັນຜູ້ທີ່ມີຈຸດປະສົງຈະໄດ້ຮັບການປົກປ້ອງການປະດິດສ້າງດັ່ງກ່າວ ໃນຂອບເຂດ ສປປ ລາວ |
| **ເງື່ອນໄຂໃນການຂໍເອກະສານ** | - ອີງຕາມກົດໝາຍຊັບສິນທາງປັນຍາ ມາດຕາ 26 ບຸກຄົນທີ່ມີສິດໄດ້ຮັບການປົກປ້ອງສິດ ມີດັ່ງນີ້: (i) ເປັນພົນລະເມືອງລາວ ຫລື ຜູ້ທີ່ມີທີ່ຢູ່ອາໄສ ຢູ່ ສປປ ລາວ ຫລື ນິຕິບຸກຄົນ ຫລື ການຈັດຕັ້ງທີ່ສ້າງຕັ້ງຂຶ້ນ ພາຍໃຕ້ກົດໝາຍຂອງ ສປປ ລາວ; (ii) ບຸກຄົນທີ່ມີສັນຊາດ ຫລື ມີທີ່ຢູ່ອາໄສຢູ່ ປະເທດໃດໜຶ່ງ ຊຶ່ງເປັນພາຄີຂອງສົນທິສັນຍາປາຣີ ຫລື ຂໍ້ຕົກລົງສາກົນອື່ນ ກ່ຽວກັບ ການປົກປ້ອງຊັບສິນອຸດສາຫະກໍາ ທີ່ ສປປ ລາວ ເຂົ້າຮ່ວມເປັນພາຄີ; (iii) ບຸກຄົນ, ນິຕິບຸກຄົນ ຫລື ການຈັດຕັ້ງ ທີ່ມີສະຖານທີ່ດໍາເນີນການຄ້າ ແລະ ອຸດສາຫະກໍາຕົວຈິງ ແລະ ມີປະສິດທິຜົນ ຢູ່ໃນອານາເຂດຂອງປະເທດໃດໜຶ່ງ ທີ່ເປັນພາຄີຂອງ ສົນທິສັນຍາປາຣີ ຫລື ຂໍ້ຕົກລົງສາກົນອື່ນ ກ່ຽວກັບ ການປົກປ້ອງຊັບສິນອຸດສາຫະກໍາ ທີ່ ສປປ ລາວ ເຂົ້າຮ່ວມເປັນພາຄີ- ການປະດິດສ້າງທີ່ສາມາດໄດ້ຮັບສິດທິບັດຕ້ອງມີເງື່ອນໄຂຄື: (1) ຕ້ອງເປັນການປະດິດສ້າງທີ່ບໍ່ເຄີຍມີມາກ່ອນ, ບໍ່ເຄີຍຖືກເປີດເຜີຍ ສູ່ສາທາລະນະຊົນ ດ້ວຍວາລະສານ ຫຼື ດ້ວຍການນໍາໃຊ້ຕົວຈິງ ຫຼື ຮູບການອື່ນ ຢູ່ ສປປ ລາວ ຫຼື ແຫ່ງໃດໜຶ່ງໃນໂລກ ກ່ອນວັນຍື່ນຄໍາຮ້ອງຂໍຈົດທະບຽນ ຫຼື ກ່ອນວັນທີໄດ້ຮ້ອງຂໍວັນບູລິມະສິດ ຂອງຄໍາຮ້ອງຂໍຮັບສິດທິບັດ; (2) ຕ້ອງມີຂັ້ນຕອນການປະດິດສ້າງທີ່ສູງຂຶ້ນ ເມື່ອທຽບໃສ່ການປະດິດສ້າງທີ່ມີມາກ່ອນແລ້ວ; (3) ຕ້ອງນໍາໃຊ້ໃຫ້ເປັນປະໂຫຍດໃນຂົງເຂດ ອຸດສາຫະກໍາ, ຫັດຖະກໍາ, ກະສິກໍາ, ການປະມົງ, ການຄ້າ, ການບໍລິການ ແລະ ອື່ນໆ (ມາດຕາ 13, ກົດໝາຍວ່າດ້ວຍຊັບສິນທາງປັນຍາ) |

| ກົດໝາຍ ແລະ ນິຕິກໍາອື່ນໆ ທີ່ກ່ຽວຂ້ອງ | | | |
|---|---|---|---|
| **ຊື່** | **ເລກທີ** | **ລົງວັນທີ** | **ໝາຍເຫດ** |
| ກົດໝາຍວ່າດ້ວຍຊັບສິນທາງປັນຍາ (ສະບັບປັບປຸງ 2017) | 38/ສພຊ | 15.11.2017 | |

| ໃບອະນຸຍາດດໍາເນີນການ ຫລື ເອກະສານທີ່ຈໍາເປັນ ຫລື ຕິດພັນ | | |
|---|---|---|
| **ຊື່** | **ປະເພດ** | **ໝາຍເຫດ** |
| ${SUPPORT_NAME} | ${SUPPORT_TYPE} | ${SUPPORT_COMMENT} |

| ເອກະສານທີ່ຕ້ອງປະກອບສຳລັບການຍື່ນຂໍເອກະສານ | | |
|---|---|---|
| **ຊື່ເອກະສານ** | **ປະເພດເອກະສານ** | **ຕົວຢ່າງເອກະສານ** |
| ${ATTACHMENT_NAME} | ${ATTACHMENT_TYPE} | ${ATTACHMENT_FILE} |

| ເອກະສານທີ່ຕ້ອງປະກອບສຳລັບການຕໍ່ອາຍຸ | | |
|---|---|---|
| ຊື່ເອກະສານ | ປະເພດເອກະສານ | ຕົວຢ່າງເອກະສານ |
| ${ATTACHMENT_NAME_RENEW} | ${ATTACHMENT_TYPE_RENEW} | ${ATTACHMENT_FILE_RENEW} |

| ຮູບແບບການຍື່ນເອກະສານ | | |
|---|---|---|
| **ການຍື່ນເອກະສານ** | ຢູ່ທີ່ຫ້ອງການເຈົ້າຫນ້າທີ່ | |
| **ທີ່ຢູ່ຂອງພາກສ່ວນທີ່ຮັບຜິດຊອບ** | ກົມຊັບສິນທາງປັນຍາ, ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ | |
| **ໄລຍະເວລາໃນການ ພິຈາລະນາຄຳຮ້ອງ (ວັນ)** | 960 | 1. ກົມຈະກວດສອບຄຳຮ້ອງຂໍຈົດທະບຽນເບື້ອງຕົ້ນ ເພື່ອຮັບປະກັນວ່າ ຄຳຮ້ອງຂໍມັ<br>ຄົບຖ້ວນຖືກຕ້ອງຕາມແບບຟອມ ແລະ ໄດ້ຈ່າຍຄ່າທຳນຽມແລ້ວ ຫລືບໍ່ ກ່ອນ2.<br>ພາຍຫລັງການກວດສອບເບື້ອງຕົ້ນ: (i) ກໍຈະຈັດພິມເຜີຍແຜ່ລົງໃນຈົດໝາຍເຫດທ<br>ຊັບສິນອຸດສາຫະກຳ ໃນເດືອນທີສິບເກົ້າ ນັບແຕ່ວັນຍື່ນຄຳຮ້ອງ; ແລະ (ii)<br>ດຳເນີນການກວດສອບເນື້ອໃນເພື່ອກຳນົດໃຫ້ຮູ້ວ່າມີຄວາມສອດຄ່ອງກັບເງື່ອນໄຂຕ<br>ຫລື ບໍ່ ໃນຂອບໄລຍະເວລາ 32 ເດືອນນັບແຕ່ວັນຍື່ນຄຳຮ້ອງຂໍ. ແຕ່ໃນກໍລະນີຜູ້ຮ້ອ<br>ຫລື ກວດສອບໂດຍອົງການອື່ນມາກ່ອນແລ້ວ,<br>ຜູ້ຮ້ອງຂໍສາມາດສະໜອງສຳເນົາຂອງບົດລາຍງານຈາກອົງການດັ່ງກ່າວ ແລະ ສະເ<br>ແທນທີ່ຈະດຳເນີນການຄົ້ນຫາ ຢູ່ ສປປ ລາວໄດ້ |

| ການຕໍ່ອາຍຸເອກະສານ | |
|---|---|
| **ເອກະສານມີກຳນົດອາຍຸ ຫຼື ບໍ່?** | **ໃບອະນຸຍາດມີອາຍຸການນຳໃຊ້ຈັກເດືອນ?** |
| ມີ | 240 |
| **ຂັ້ນຕອນ ແລະ ເງື່ອນໄຂສຳລັບການຕໍ່ອາຍຸເອກະສານ** | |
| **ຂັ້ນຕອນ ແລະ ເງື່ອນໄຂສຳລັບການຕໍ່ອາຍຸໃບອະນຸຍາດ** | ເພື່ອຮັກສາອາຍຸການປົກປ້ອງນັ້ນ, ເຈົ້າຂອງສິດທິບັດ ຕ້ອງຈ່າຍຄ່າທຳນຽມລ່ວງໜ້າ ແຕ່ລະປີ |

| ຄ່າທຳນຽມສຳລັບການຍື່ນຂໍເອກະສານ | | | | |
|---|---|---|---|---|
| **ມີຄ່າໃບຄຳຮ້ອງ ຫຼື ບໍ່ ?** | **ຄ່າບໍລິການ** | **ຄ່າທຳນຽມທາງວິຊາການ** | **ຄ່າແບບຟອມຄຳຮ້ອງ** | **ຄ່າໃຊ້ຈ່າຍທັງໝົດ** |
| ມີ | 600000.00 | 300000.00 | 200000.00 | 1100000.00 |
| **Comments** | ອີງຕາມ ລັດຖະດຳລັດ<br>03/ປທຄ່າບໍລິການການຈົດທະບຽນແມ່ນຄຳນວນຕາມແຕ່ລະຂັ້ນຕອນຂອງການກວດສອບການຂໍຈົດທະບຽ<br>ລວມທັງໝົດຕຳ່ສຸດ 1,2000,000 ກີບ | | | |
| **ຄ່າບໍລິການເພີ່ມເຕີມ** | | | | |
| ລາຍການຄ່າໃຊ້ຈ່າຍອື່ນໆ | | | | |
| ບໍ່ມີ | 0.00 | 0.00 | 0.00 | 0.00 |
| **ຄຳ ເຫັນຄ່າ ທຳນຽມເພີ່ມເຕີມ** | | | | |

| ຄ່າທຳນຽມສຳລັບການຂໍຕໍ່ອາຍຸເອກະສານ | | | | |
|---|---|---|---|---|
| **ມີຄ່າຕໍ່ອາຍຸເອກະສານ ຫຼື ບໍ່?** | **ຄ່າບໍລິການ** | **ຄ່າທຳນຽມທາງວິຊາການ** | **ຄ່າໃບຄຳຮ້ອງ** | **ຄ່າໃຊ້ຈ່າຍທັງໝົດ** |
| ມີ | 6400000.00 | 0.00 | 42000000.00 | 48400000.00 |
| **ຄຳເຫັນ** | ອີງຕາມ ລັດຖະດຳລັດ 03/ປທ 1. ຄ່າທຳນຽມຈົດທະບຽນ ສຳລັບໄລຍະເວລາ 20 ປີຂອງອາຍຸການຄຸ້ມຄອງ ແມ່ນຄິດໄລ່ໃນ ອັດຕາດັ່ງນີ້: (i) 4 ປີທຳອິດ = 300,000 ກີບ; (ii) ປີທີ 5 = 300,000 ກີບ; (iii) ປີທີ 6 = 400,000 ກີບ; (iv) ປີທີ 7 = 500,000 ກີບ; (v) ປີທີ 8 = 600,000 ກີບ; (vi) ປີທີ 9 = 800,000 ກີບ; (vii) ປີທີ 10 = 1,000,000 ກີບ; (viii) ປີທີ 11 = 1,400,000 ກີບ; (ix) ປີທີ 12 = 1,800,000 ກີບ; (x) ປີທີ 13 = 2,300,000 ກີບ; (xi) ປີທີ 14 = 2,800,000 ກີບ; (xii) ປີທີ 15 = 3,300,000; (xiii) ປີທີ 16 = 3,900,000 ກີບ; (xiv) ປີທີ 17 = 4,500,000 ກີບ; (xv) ປີທີ 18 = 5,100,000 ກີບ; (xvi) ປີທີ 19 = 5,700,000 ກີບ; (xvii) ປີທີ 20 = 6,500,000 ກີບ ຄ່າບໍລິການເພື່ອຮັກສາອາຍຸການຂອງສິດທິບັດ ແມ່ນເກັບນັບຈາກປີທີ 5 ໃນອັດຕາ ປີລະ 400,000 ກີບ - ໃນກໍລະນີທີ່ເຈົ້າຂອງສິດທິບັດບໍ່ຕ້ອງການນຳໃຊ້ສິດທິບັດອີກຕໍ່ໄປ ແມ່ນສາມາດຢຸດຕິການຊຳລະເພື່ອຮັກສາອາຍຸການ ແລ້ວສິດທິບັດດັ່ງກ່າວກໍ່ຈະກາຍເປັນຂອງສາທາລະນະໃນເວລາທີ່ໄດ້ຢຸດຕິການຊຳລະຂອງປີນັ້ນໆ. | | | |
| ຄ່າໃຊ້ຈ່າຍອື່ນໆ | | | | |
| ລາຍການຄ່າໃຊ້ຈ່າຍອື່ນໆ | | | | |
| ບໍ່ມີ | 0.00 | 0.00 | 0.00 | 0.00 |

| | |
|---|---|
| **ຄຳ ເຫັນກ່ຽວກັບຄ່າທຳ<br>ນຽມຕໍ່ອາຍຸເພີ່ມເຕີມ** | |